# ການຄ້າໂດຍຫຍໍ້ໃນເຂດອາຊີ-ປາຊີຟິກ

## ສໍາລັບ ສປປ ລາວ

ການຄ້າສໍາລັບສິນຄ້າ: ການສົ່ງອອກຂອງ ສປປ ລາວໄດ້ເຕີບໂຕຢ່າງໄວວາເຖິງ 17.1% ໃນປີ 2014, ເມື່ອທຽບກັບໄລຍະຜ່ານມາ ທີ່ມີອັດຕາການເຕີບໂຕສະເລ່ຍ 11% ແຕ່ຊ່ວງປີ 2010-2014. ການສົ່ງອອກຂອງ ສປປ ລາວ ສ່ວນໃຫຍ່ແມ່ນສິນຄ້າພື້ນຖານ, ເຊິ່ງຜະລິດຕະພັນໄມ້ ແລະ ທອງແດງ ແມ່ນກວມອັດຕາສ່ວນສູງສຸດ ເຖິງ 20.6% ແລະ 15.7% ຕາມລໍາດັບ. ຍ້ອນພູມມີປະເທດຖືກປົກຄຸມດ້ວຍພູຜາ ແລະ ອຸດົມສົມບູນຂອງຊັບພະຍາກອນນໍ້າ ສົ່ງຜົນໃຫ້ສາມາດຜະລິດພະລັງງານໄຟຟ້າໄດ້ຈໍານວນມະຫາສານ, ເຊິ່ງກວມເຖິງ 14.9% ຂອງມູນຄ່າການສົ່ງອອກທັງໝົດ ແລະ ແມ່ນສິນຄ້າທີ່ມີມູນຄ່າການສົ່ງອອກຫຼາຍເປັນອັນດັບສາມ. ສປປ ລາວ ສ່ວນໃຫຍ່ແມ່ນເຮັດການຄ້າກັບປະເທດເພື່ອນບ້ານ ໂດຍສະເພາະແມ່ນປະເທດໄທ ແລະ ຈີນ, ກວມເຖິງ 83.1% ຂອງມູນຄ່າການສົ່ງອອກທັງໝົດ ແລະ 86.5% ຂອງມູນຄ່າການນໍາເຂົ້າທັງໝົດ. ຄ້າຍຄືກັບປະເທດນ້ອຍໆອື່ນໆ, ສິນຄ້າຕົ້ນຕໍທີ່ ສປປ ລາວ ແມ່ນນໍາເຂົ້າແມ່ນ ນໍ້າມັນເຊື້ອໄຟ, ລວມທັງສິນຄ້າທີ່ນໍາໃຊ້ເຕັກ ໂນໂລຊີຂັ້ນສູງ ເຊັ່ນ: ຍານພາຫະນະ ແລະ ອຸປະກອນເອເລັກໂຕນິກຕ່າງໆ.

ຕ່ອງໂສ້ມູນຄ່າເພີ່ມທົ່ວໂລກ (GVCs): ການເຂົ້າຮ່ວມຂອງ ສປປ ລາວ ໃນຕ່ອງໂສ້ມູນຄ່າເພີ່ມທົ່ວໂລກ ສ່ວນໃຫຍ່ແມ່ນເປັນຜູ້ສະໜອງ ວັດຖຸດິບ. ອັດຕາສ່ວນຂອງສິນຄ້າຂັ້ນກາງຕໍ່ການສົ່ງອອກທັງໝົດຂອງ ສປປ ລາວ (42%) ແມ່ນສູງກວ່າພາກພື້ນອາຊີ-ປາຊີຟິກ (18%), ເຊິ່ງຊີ້ໃຫ້ເຫັນວ່າ ປະເທດຍັງບໍ່ສາມາດເຂົ້າຮ່ວມໃນຕ່ອງໂສ້ຂອງຂອງການຜະລິດໄດ້.

ການລົງທຶນໂດຍກົງຂອງຕ່າງປະເທດ (FDI): ການລົງທຶນໂດຍກົງຂອງຕ່າງປະເທດໃນ ສປປ ລາວ ແມ່ນເຕີບໂຕແບບກ້າວກະໂດດ ເຖິງ 68.9% ໃນປີ 2014, ເມື່ອທຽບກັບໄລຍະຜ່ານມາ ທີ່ມີອັດຕາການເຕີບໂຕສະເລ່ຍ 26.8% ແຕ່ຊ່ວງປີ 2010-2014, ສາເຫດສໍາຄັນ ແມ່ນຍ້ອນ ການເພີ່ມຂຶ້ນຂອງການລົງທຶນຈາກ ສປ ຈີນ ໃນຂະແໜງພະລັງງານໄຟຟ້ານໍ້າຕົກ ທີ່ຕັ້ງຢູ່ລຽບຕາມແມ່ນໍ້າຂອງ ແລະ ລຸ່ມນໍ້າອີລາວາດີ. ສປປ ລາວ ແມ່ນປະສົບຜົນສໍາເລັດໃນການດຶງດູດນັກລົງທຶນຈາກພາກພື້ນ - ໂດຍສະເພາະແມ່ນການລົງທຶນຈາກ ປະເທດຈີນ, ໄທ ແລະ ມາເລເຊຍ ໃນການສົ່ງເສີມການລົງທຶນໃນອຸດສາຫະກໍາພະລັງງານໄຟຟ້າ. ເຖິງຢ່າງໃດກໍ່ຕາມ, ອຸປະສັກສໍາຄັນຂອງການລົງທຶນໂດຍກົງຂອງຕ່າງປະເທດແມ່ນ ຂັ້ນຕອນການເອກະສານຍາວ, ການພັດທະນາໂຄງລ່າງພື້ນຖານຈໍາກັດ ແລະ ສະພາບແວດລ້ອມຂອງການດໍາເນີນທຸລະກິດຍັງບໍ່ເອື້ອອໍານວຍ.

ພາສີ: ອັດຕາພາສີນໍາເຂົ້າ (MFN) ສະເລ່ຍທີ່ຖືກນໍາໃຊ້ແມ່ນ 9.5% ແລະ 9.3%, ເຊິ່ງສູງກວ່າອັດຕາພາສີໃນເຂດອາຊີ-ປາຊີຟິກສະເລ່ຍແມ່ນ 7.4% ແລະ 7.4%.

ຕົ້ນທຶນທາງການຄ້າ: ຕົ້ນທຶນທາງການຄ້າໃນພາກພື້ນຂອງ ສປປ ລາວ ແມ່ນໄດ້ຫຼຸດລົງຢ່າງໄວວາແຕ່ປີ 2009. ຕົ້ນທຶນທາງການຄ້າລະຫວ່າງປະເທດອາຊີ-ປາຊີຟິກ ແລະ ລາວ ແມ່ນສູງກວ່າ 3 ປະເທດອາຊີຕາເວັນອອກ (ຈີນ, ຍີ່ປຸ່ນ ແລະ ສ. ເກົາຫຼີ) – ທຽບກັບຕົ້ນທຶນມາດຖານໃນພາກພື້ນ ແລະ ສູງກ່ວາ 3 ປະເທດຢູໂຣບ (ຝະລັ່ງ, ເຢຍລະມັນ ແລະ ອັງກິດ) - ທຽບກັບຕົ້ນທຶນມາດຖານນອກພາກພື້ນ.

ຂໍ້ຕົກລົງທາງດ້ານການຄ້າ: ສປປ ລາວ ມີ 8 ຂໍ້ຕົກລົງທາງການຄ້າ ທີ່ມີຜົນບັງຄັບໃຊ້, ເຊິ່ງສູງກ່ວາ ເຂດອາຊີ-ປາຊີຟິກ ທີ່ຄ່າສະເລ່ຍແມ່ນ 7 ຂໍ້ຕົກລົງ. ທັງນີ້ກໍ່ຍ້ອນວ່າ ການຄ້າແມ່ນສຸມໃສ່ແຕ່ບາງປະເທດໃນພາກພື້ນ ແລະ ປະເທດດັ່ງກ່າວກໍ່ແມ່ນຄູ່ຄ້າທີ່ໄດ້ເຮັດຂໍ້ຕົກລົງທາງດ້ານການຄ້າຮ່ວມກັນ. ມູນຄ່າການຄ້າຂອງ ສປປ ລາວ ກັບປະເທດທີ່ມີຂໍ້ຕົກລົງທາງດ້ານການຄ້າຮ່ວມກັນ ແມ່ນມີມູນຄ່າສູງຫຼາຍ: 86% ຂອງການສົ່ງອອກທັງໝົດແມ່ນສົ່ງອອກໄປປະເທດດັ່ງກ່າວ, ທຽບກັບ 35%;ສໍາລັບການສົ່ງອອກໄປພາກພື້ນ ອາຊີ-ປາຊີຟິກທັງໝົດ. 94% ຂອງການນໍາເຂົ້າທັງໝົດແມ່ນ ນໍາເຂົ້າຈາກປະເທດທີ່ມີຂໍ້ຕົກລົງທາງດ້ານການຄ້າຮ່ວມກັນ, ທຽບກັບ 45% ສໍາລັບການນໍາເຂົ້າຈາກພາກພື້ນອາຊີ-ປາຊີຟິກ.

ຮູບທີ 1: ຕົວຊີ້ວັດຂອງການຄ້າ ແລະ ການລົງທຶນ




*Country notes summarising results of the UNRC Survey 2015 are available at: http://unnext.unescap.org/UNTFSurvey2015.asp

ຮູບທີ 2: ຕະຫຼາດສົ່ງອອກຫຼັກ




ຮູບທີ 3: ສິນຄ້າຫຼັກສົ່ງອອກ




ຮູບທີ 4: ການຄ້າສຳລັບສິນຄ້າຖືກນຳໃຊ້




ຮູບທີ 5: ການລົງທຶນໂດຍກົງຂອງຕ່າງປະເທດ




ຮູບທີ 6: ພາສີ




ຮູບທີ 7: ຕົ້ນທຶນທາງການຄ້າ





预览已结束，完整报告链接和二维码如下：
https://www.yunbaogao.cn/report/index/report?reportId=5_3942